ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 2239/ກປ

ນະຄອນຫຼວງວຽງຈັນ, ວັນທີ 30/11/20

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງ ຄະນະຊີ້ນຳ ແລະ ຄະນະປະສານງານ ເຄືອຂ່າຍການບັງຄັບໃຊ້ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ ແລະ ກົດໝາຍວ່າດ້ວຍປ່າໄມ້ (LAO-WEN)

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017;
- ອີງຕາມ ໜັງສືສະເໜີຂອງ ກົມກວດກາປ່າໄມ້ ສະບັບເລກທີ 2095/ກກປມ, ລົງວັນທີ 12 ພະຈິກ 2020;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 3082/ກຈພ, ລົງວັນທີ 23 ພະຈິກ 2020.

**ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ:**

ມາດຕາ 1 ແຕ່ງຕັ້ງຄະນະປະສານງານ ເຄືອຂ່າຍການບັງຄັບໃຊ້ກົດໝາຍວ່າດ້ວຍ ສັດນ້ຳ-ສັດປ່າ ແລະ ກົດໝາຍວ່າດ້ວຍປ່າໄມ້ (LAO-WEN) ດັ່ງມີລາຍລະອຽດລຸ່ມນີ້:

**ກ. ຄະນະຊີ້ນຳ:**

| | |
|---|---|
| 1. ຫົວໜ້າກົມກວດກາປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ | ເປັນຫົວໜ້າ; |
| 2. ຮອງຫົວໜ້າກົມກວດກາປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ | ເປັນຮອງ; |
| 3. ຮອງຫົວໜ້າກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ | ເປັນຮອງ; |
| 4. ຮອງຫົວໜ້າກົມຕິດຕາມກວດກາການດຳເນີນຄະດີອາຍາ, ອົງການໄອຍະການປະຊາຊົນສູງສຸດ | ເປັນຄະນະ; |
| 5. ຮອງຫົວໜ້າກົມຕິດຕາມກວດກາທົ່ວໄປ, ອົງການໄອຍະການປະຊາຊົນສູງສຸດ | ເປັນຄະນະ; |
| 6. ຮອງຫົວໜ້າກົມຕຳຫຼວດສິ່ງແວດລ້ອມ, ກະຊວງປ້ອງກັນຄວາມສະຫງົບ | ເປັນຄະນະ; |
| 7. ຮອງຫົວໜ້າກົມຕຳຫຼວດສາກົນ, ກະຊວງປ້ອງກັນຄວາມສະຫງົບ | ເປັນຄະນະ; |
| 8. ຮອງຫົວໜ້າກົມພາສີ, ກະຊວງການເງິນ | ເປັນຄະນະ; |
| 9. ຮອງຫົວໜ້າສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ | ເປັນຄະນະ; |
| 10. ຮອງຫົວໜ້າກົມກວດກາ, ກະຊວງປ້ອງກັນປະເທດ | ເປັນຄະນະ. |

➢ **ຄະນະດັ່ງກ່າວມີໜ້າທີ່:**

- ສ້າງ ແລະ ຈັດຕັ້ງປະຕິບັດແຜນດຳເນີນງານສະກັດກັ້ນ ແລະ ຕ້ານອາຊະຍາກຳສັດນ້ຳ, ສັດປ່າ ແລະ ຊັບພະຍາກອນປ່າໄມ້ ໃນ ສປປ ລາວ ພ້ອມທັງດຳເນີນການເຜີຍແຜ່ເຊື່ອມຊຶມແຜນດຳເນີນງານດັ່ງ ກ່າວ;
- ປັບປຸງ ແລະ ສ້າງບັນດານິຕິກຳ ກ່ຽວກັບເຄືອຂ່າຍການບັງຄັບໃຊ້ກົດໝາຍວ່າດ້ວຍ ສັດນ້ຳ-ສັດປ່າ ແລະ ກົດໝາຍວ່າດ້ວຍປ່າໄມ້ ຂັ້ນສູນກາງ ແລະ ທ້ອງຖິ່ນ;
- ຊຸກຍູ້ສົ່ງເສີມການຮ່ວມມື, ການປະສານງານ ແລະ ການແລກປ່ຽນຂໍ້ມູນຂ່າວສານໃນຄະນະປະສານງານ ຂັ້ນຂອງຕົນ ແລະ ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດວຽກງານຕ້ານ ແລະ ສະກັດກັ້ນອາຊະຍາກຳສັດນ້ຳ, ສັດປ່າ ແລະ ຊັບພະຍາກອນປ່າໄມ້ ໃຫ້ຖືກຕ້ອງຕາມພາລະບົດບາດຂອງແຕ່ລະຂະແໜງການ;
- ຮ່ວມມືກັບພາກພື້ນ ແລະ ສາກົນ ເພື່ອແລກປ່ຽນຂໍ້ມູນຂ່າວສານ ກ່ຽວກັບວຽກງານການຕ້ານ, ການປ້ອງກັນ, ການທັບມ້າງ ແລະ ດຳເນີນຄະດີ ອາຊະຍາກຳສັດນ້ຳ, ສັດປ່າ ແລະ ຊັບພະຍາກອນປ່າໄມ້ຂ້າມຊາດ;
- ຄົ້ນຄ້ວາ, ພິຈາລະນາ ແລະ ລາຍງານຂໍ້ຂັດແຍ່ງໃນການຈັດຕັ້ງປະຕິບັດວຽກງານຂອງເຄືອຂ່າຍບັງຄັບໃຊ້ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ ແລະ ກົດໝາຍວ່າດ້ວຍປ່າໄມ້ທັງສູນກາງ ແລະ ທ້ອງຖິ່ນ;
- ເປັນປະທານກອງປະຊຸມ ກ່ຽວກັບວຽກງານຂອງເຄືອຂ່າຍບັງຄັບໃຊ້ ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ ແລະ ກົດໝາຍວ່າດ້ວຍປ່າໄມ້ ໃນແຕ່ລະໄລຍະ;
- ເຂົ້າຮ່ວມກອງປະຊຸມ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນອາຊະຍາກຳສັດນ້ຳ-ສັດປ່າ ແລະ ຊັບພະຍາກອນປ່າໄມ້ ທັງພາຍໃນ ແລະ ຕ່າງປະເທດ;
- ລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງ ເຄືອຂ່າຍບັງຄັບໃຊ້ກົດໝາຍວ່າດ້ວຍ ສັດນ້ຳ-ສັດປ່າ ແລະ ກົດໝາຍວ່າດ້ວຍປ່າໄມ້ ໃຫ້ຂັ້ນເທິງພິຈາລະນາ ແລະ ມີທິດຊີ້ນຳ ໃນແຕ່ລະໄລຍະ;
- ປະຕິບັດໜ້າທີ່ຕາມການມອບໝາຍຂອງຂັ້ນເທິງ.

໒. <u>ຄະນະປະສານງານ</u>:

1. ຫົວໜ້າພະແນກກວດກາສັດນ້ຳ-ສັດປ່າ, ກົມກວດກາປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ — ເປັນຫົວໜ້າ;
2. ຫົວໜ້າພະແນກສືບສວນ-ສອບສວນ, ກົມກວດກາປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ — ເປັນຮອງ;
3. ຫົວໜ້າພະແນກກວດກາປ່າໄມ້ ແລະ ທີ່ດິນປ່າໄມ້, ກົມກວດກາປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ — ເປັນຄະນະ;
4. ຫົວໜ້າພະແນກແຜນການ ແລະ ການຮ່ວມ, ກົມກວດປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ — ເປັນຄະນະ;
5. ຫົວໜ້າພະແນກຄຸ້ມຄອງສັດນ້ຳ ແລະ ສັດປ່າ, ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ — ເປັນຄະນະ;
6. ຫົວໜ້າພະແນກຄຸ້ມຄອງປ່າສະຫງວນ, ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ — ເປັນຄະນະ;
7. ຫົວໜ້າພະແນກຈັດຕັ້ງປະຕິບັດກົດໝາຍສິ່ງແວດລ້ອມ, ກົມຕຳຫຼວດສິ່ງແວດລ້ອມ, ກະຊວງປ້ອງກັນຄວາມສະຫງົບ — ເປັນຄະນະ;
8. ຫົວໜ້າພະແນກກວດກາການດຳເນີນຄະດີຢາເສບຕິດ, ກົມຕິດຕາມກວດກາການດຳເນີນຄະດີອາຍາ, ອົງການໄອຍະການປະຊາຊົນສູງສຸດ — ເປັນຄະນະ;
9. ຫົວໜ້າພະແນກສືບສວນ-ສອບສວນປາບປາມການລັກລອບການຄ້າຂາຍເຖື່ອນ, ກົມພາສີ, ກະຊວງການເງິນ — ເປັນຄະນະ;
10. ຫົວໜ້າພະແນກຕຳຫຼວດສາກົນ-ອາຊຽນ, ກົມຕຳຫຼວດສາກົນ, ກະຊວງປ້ອງກັນຄວາມສະຫງົບ — ເປັນຄະນະ;

11. ຫົວໜ້າພະແນກຊັບພະຍາກອນພັນທຸກໍາ, ສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຄະນະ;
12. ຫົວໜ້າພະແນກຕ້ານ ແລະ ສະກັດກັ້ນການສໍ້ລາດບັງຫຼວງ,ກົມກວດກາ, ກະຊວງປ້ອງກັນປະເທດ ເປັນຄະນະ;
13. ຫົວໜ້າພະແນກສືບສວນຂ່າວສານຊາຍແດນ, ກົມທະຫານຊາຍແດນ, ກະຊວງປ້ອງກັນປະເທດ ເປັນຄະນະ;
14. ຫົວໜ້າພະແນກການຄ້າຊາຍແດນ, ກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສະຫະກໍາ ແລະ ການຄ້າ ເປັນຄະນະ;
15. ຫົວໜ້າພະແນກຕ້ານການສໍ້ລາດບັງຫຼວງ, ກົມກວດກາຕ້ານການສໍ້ລາດບັງຫຼວງ, ອົງການກວດສອບລັດຖະບານ ເປັນຄະນະ;
16. ຫົວໜ້າພະແນກວິເຄາະຂ່າວກອງ, ສໍານັກງານຂໍ້ມູນຕ້ານການຟອກເງິນ, ທະນາຄານແຫ່ງ ສປປ ລາວ ເປັນຄະນະ;
17. ຫົວໜ້າກອງກວດກາປ່າໄມ້ ປະຈໍາແຂວງ ແລະ ນະຄອນຫຼວງ ເປັນຄະນະ.

➢ **ຄະນະດັ່ງກ່າວມີໜ້າທີ່:**

- ສ້າງແຜນດໍາເນີນງານສະກັດກັ້ນ ແລະ ຕ້ານອາຊະຍາກໍາສັດນໍ້າ, ສັດປ່າ ແລະ ຊັບພະຍາກອນປ່າໄມ້ ໃນ ສປປ ລາວ;
- ທົບທວນ, ປັບປຸງ ແລະ ສ້າງບັນດານິຕິກໍາ ກ່ຽວກັບເຄືອຂ່າຍການບັງຄັບໃຊ້ກົດໝາຍວ່າດ້ວຍສັດນໍ້າ-ສັດປ່າ ແລະ ກົດໝາຍວ່າດ້ວຍປ່າໄມ້ ຂັ້ນສູນກາງ ແລະ ທ້ອງຖິ່ນ;
- ຮ່ວມມື, ປະສານງານ ແລະ ແລກປ່ຽນຂໍ້ມູນຂ່າວສານ ໃນຄະນະປະສານງານຂັ້ນຂອງຕົນ ແລະ ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດວຽກງານຕ້ານ ແລະ ສະກັດກັ້ນອາຊະຍາກໍາສັດນໍ້າ, ສັດປ່າ ແລະ ຊັບພະຍາກອນປ່າໄມ້ ໃຫ້ຖືກຕ້ອງຕາມພາລະບົດບາດຂອງແຕ່ລະຂະແໜງການ;
- ຊ່ວຍວຽກຄະນະຊີ້ນໍາໃນການຈັດຕັ້ງປະຕິບັດແຜນດໍາເນີນງານສະກັດກັ້ນ ແລະ ຕ້ານອາຊະຍາກໍາສັດນໍ້າ, ສັດປ່າ ແລະ ຊັບພະຍາກອນປ່າໄມ້ ໃນ ສປປ ລາວ;
- ເຜີຍແຜ່ເຊື່ອມຊຶມແຜນດໍາເນີນງານ, ຂໍ້ຕົກລົງ, ຄູ່ມືການປະຕິບັດວຽກງານ ແລະ ນິຕິກໍາອື່ນທີ່ກ່ຽວຂ້ອງ ໃຫ້ແກ່ຄະນະປະສານງານຂັ້ນແຂວງ ແລະ ຂັ້ນເມືອງ ຕາມພາລະບົດບາດຂອງຕົນ;
- ເຂົ້າຮ່ວມການກວດກາ ແລະ ສືບສວນ-ສອບສວນ ໃນກໍລະນີມີເຫດການອາຊະຍາກໍາສັດນໍ້າ, ສັດປ່າ ແລະ ຊັບພະຍາກອນປ່າໄມ້ ທີ່ຮ້າຍແຮງ;
- ປຶກສາຫາລືແກ້ໄຂບັນຫາໃນການຈັດຕັ້ງປະຕິບັດວຽກງານຕົວຈິງຂອງເຄືອຂ່າຍບັງຄັບໃຊ້ກົດໝາຍວ່າດ້ວຍສັດນໍ້າ-ສັດປ່າ ແລະ ກົດໝາຍປ່າໄມ້ ທັງສູນກາງ ແລະ ທ້ອງຖິ່ນ ກໍລະນີແກ້ໄຂບໍ່ສໍາເລັດ ສະເໜີໃຫ້ຄະນະຊີ້ນໍາພິທົດຊີ້ນໍາ;
- ປະສານງານ ແລະ ແລກປ່ຽນຂໍ້ມູນຂ່າວສານ ກ່ຽວກັບວຽກງານການຕ້ານ ແລະ ສະກັດກັ້ນອາຊະຍາກໍາສັດນໍ້າ, ສັດປ່າ ແລະ ຊັບພະຍາກອນປ່າໄມ້ ຕາມພາລະບົດບາດຂອງແຕ່ລະຂະແໜງການ;
- ປະສານກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນຂໍ້ມູນຂ່າວສານ ກ່ຽວກັບວຽກງານ ການຕ້ານ, ການປ້ອງກັນ, ການທັບມ້າງ ແລະ ດໍາເນີນຄະດີ ອາຊະຍາກໍາສັດນໍ້າ, ສັດປ່າ ແລະ ຊັບພະຍາກອນປ່າໄມ້ ຂ້າມຊາດ;
- ເຂົ້າຮ່ວມກອງປະຊຸມ, ສໍາມະນາ, ຝຶກອົບຮົມກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນອາຊະຍາກໍາສັດນໍ້າ, ສັດປ່າ ແລະ ຊັບພະຍາກອນປ່າໄມ້ ແລະ ກອງປະຊຸມອື່ນໆ ທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ;

- ລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງເຄືອຂ່າຍບັງຄັບໃຊ້ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ ແລະ ກົດໝາຍວ່າດ້ວຍປ່າໄມ້ ໃຫ້ຄະນະຊີ້ນຳ ແຕ່ລະໄລຍະ;
- ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເຜີຍແຜ່ ແລະ ປູກຈິດສຳນຶກໃຫ້ສັງຄົມ ກ່ຽວກັບການອະນຸລັກ ສັດນ້ຳ, ສັດປ່າ ແລະ ຊັບພະຍາກອນປ່າໄມ້ຂ້າມຊາດໃຫ້ຍືນຍົງ;
- ກໍລະນີຜູ້ຖືກແຕ່ງຕັ້ງໃນ ມາດຕາ 2 ບໍ່ສາມາດເຂົ້າຮ່ວມຕ້ອງມອບໃຫ້ຜູ້ຕາງໜ້າພາຍໃນພະແນກເຂົ້າຮ່ວມແທນ;
- ປະຕິບັດໜ້າທີ່ຕາມການມອບໝາຍຂອງຂັ້ນເທິງ.

ຄ. <u>ຄະນະຮັບຜິດຊອບຈຸດປະສານງານ</u>:

❖ **ຈຸດປະສານງານຂອງ ກົມກວດກາປ່າໄມ້:**

1. ຮອງຫົວໜ້າພະແນກກວດກາ ສັດນ້ຳ-ສັດປ່າ, ກົມກວດກາປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ — ເປັນຫົວໜ້າ;
2. ຮອງຫົວໜ້າພະແນກສືບສວນ-ສອບສວນ, ກົມກວດກາປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ — ເປັນຮອງ;
3. ຮອງຫົວໜ້າພະແນກກວດກາປ່າໄມ້ ແລະ ທີ່ດິນປ່າໄມ້, ກົມກວດກາປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ — ເປັນຮອງ;
4. ເຈົ້າໜ້າທີ່ປ່າໄມ້, ພະແນກກວດກາ ສັດນ້ຳ-ສັດປ່າ, ກົມກວດກາປ່າໄມ້ — ເປັນຄະນະ;
5. ເຈົ້າໜ້າທີ່ປ່າໄມ້, ພະແນກກວດກາປ່າໄມ້ ແລະ ທີ່ດິນປ່າໄມ້, ກົມກວດກາປ່າໄມ້ — ເປັນຄະນະ;
6. ເຈົ້າໜ້າທີ່ປ່າໄມ້, ພະແນກສືບສວນ-ສອບສວນ, ກົມກວດກາປ່າໄມ້ — ເປັນຄະນະ.

➢ **ຄະນະດັ່ງກ່າວມີໜ້າທີ່:**

- ສັງລວມບົດລາຍງານ ຈາກບັນດາພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນອາຊະຍາກຳສັດນ້ຳ, ສັດປ່າໄມ້ ແລະ ຊັບພະກອນປ່າໄມ້ ເປັນຂໍ້ມູນໃຫ້ແກ່ຄະນະປະສານງານ ເພື່ອລາຍງານຄະນະຊີ້ນຳ;
- ສົ່ງບົດລາຍງານ ກ່ຽວກັບການບັງຄັບໃຊ້ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ ແລະ ກົດໝາຍວ່າດ້ວຍປ່າໄມ້ ໃຫ້ໜ່ວຍງານຄຸ້ມຄອງສົນທິສັນຍາກ່ຽວກັບການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ ປະຈຳກົມປ່າໄມ້ ກ່ອນວັນທີ 20 ຕຸລາ ຂອງທຸກໆປີ;
- ເກັບກຳຂໍ້ມູນ ແລະ ແລກປ່ຽນຂໍ້ມູນລະຫວ່າງຈຸດປະສານງານ ກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນອາຊະຍາກຳສັດນ້ຳ, ສັດປ່າ ແລະ ຊັບພະຍາກອນປ່າໄມ້;
- ສ້າງແຜນການເຄື່ອນໄຫວ ກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນອາຊະຍາກຳສັດນ້ຳ, ສັດປ່າ ແລະ ຊັບພະຍາກອນປ່າໄມ້;
- ກະກຽມຈັດກອງປະຊຸມທົບທວນຄືນຜົນການຈັດຕັ້ງປະຕິບັດ LAO-WEN ປະຈຳໄຕມາດ ແລະ ປະຈຳປີ;
- ສັງລວມລາຍງານເກັບກຳຂໍ້ມູນຂ່າວສານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ LAO-WEN ຈາກແຕ່ລະພາກສ່ວນທີ່ກ່ຽວຂ້ອງ ເພື່ອຮ່າງເປັນບົດລາຍງານ LAO-WEN ລາຍງານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ແລະ ຈັດສົ່ງສຳເນົາບົດລາຍງານ ໃຫ້ບັນດາຂະແໜງທີ່ກ່ຽວຂ້ອງຮັບຊາບໃນແຕ່ລະໄລຍະ;
- ເຂົ້າຮ່ວມກອງປະຊຸມ, ສຳມະນາ ແລະ ຝຶກອົບຮົມທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ;
- ປະສານງານວຽກງານຮ່ວມມື ກັບອົງການຈັດຕັ້ງສາກົນຕ່າງໆ ທີ່ກ່ຽວຂ້ອງໃນການຕ້ານ ແລະ ສະກັດກັ້ນອາຊະຍາກຳສັດນ້ຳ, ສັດປ່າ ແລະ ຊັບພະຍາກອນປ່າໄມ້ ຂ້າມຊາດ;

- ປະສານງານກັບດາເຄືອຂ່າຍການບັງຄັບໃຊ້ກົດໝາຍວ່າດ້ວຍ ສັດນ້ຳ-ສັດປ່າ ແລະ ກົດໝາຍວ່າດ້ວຍປ່າໄມ້ ຂັ້ນແຂວງ, ຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອຈັດຕັ້ງປະຕິບັດວຽກງານບັງຄັບໃຊ້ກົດໝາຍວ່າດ້ວຍສັດນ້ຳ, ສັດປ່າ ແລະ ປ່າໄມ້;
- ປະຕິບັດໜ້າທີ່ຕາມການມອບໝາຍຂອງຂັ້ນເທິງ.

❖ **ຈຸດປະສານງານຂອງ ກົມຕຳຫຼວດສິ່ງແວດລ້ອມ, ກົມຕຳຫຼວດສາກົນ ກະຊວງປ້ອງກັນຄວາມສະຫງົບ; ກົມພາສີ ກະຊວງການເງິນ; ກົມທະຫານຊາຍແດນ ກະຊວງປ້ອງກັນປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ກຳນົດໄວ້ຢູ່ ມາດຕາ 2.**

➢ **ຄະນະດັ່ງກ່າວມີໜ້າທີ:**

- ສະຫຼຸບລາຍງານ ກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນອາຊະຍາກຳ ສັດນ້ຳ, ສັດປ່າ ແລະ ຊັບພະຍາກອນປ່າໄມ້ ຕາມຄວາມຮັບຜິດຊອບຂອງຕົນ ປະຈຳໄຕມາດ (ທຸກໆ ວັນທີ 10 ຫາ ວັນທີ 15 ຂອງເດືອນທ້າຍໄຕມາດ), ປະຈຳປີ (ໄລຍະ ວັນທີ 5 ຫາ ວັນທີ 10 ຂອງເດືອນ 12 ທຸກໆ ປີ) ແລ້ວສົ່ງໃຫ້ກົມກວດກາປ່າໄມ້;
- ກຳລະນີການກັກຍຶດຂອງກາງທີ່ຜິດກົດໝາຍວ່າດ້ວຍ ສັດນ້ຳ-ສັດປ່າ ແລະ ກົດໝາຍວ່າດ້ວຍປ່າໄມ້ ໃຫ້ມອບຂອງກາງ ຜູ້ຖືກຫາ ແລະ ສຳນວນຄະດີສົ່ງ ໃຫ້ເຈົ້າໜ້າທີ່ປ່າໄມ້ ເປັນໃຈກາງປະສານສົມທົບດຳເນີນຄະດີ;
- ເຂົ້າຮ່ວມກອງປະຊຸມ, ສຳມະນາ ແລະ ຝຶກອົບຮົມທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ;
- ແລກປ່ຽນຂໍ້ມູນລະຫວ່າງຈຸດປະສານງານ ແລະ ປະສານວຽກງານຮ່ວມມືກັບອົງການຈັດຕັ້ງສາກົນຕ່າງໆ ທີ່ກ່ຽວຂ້ອງໃນການຕ້ານ ແລະ ສະກັດກັ້ນອາຍາກຳ ສັດນ້ຳ, ສັດປ່າ ແລະ ຊັບພະຍາກອນປ່າໄມ້ ຂ້າມຊາດ;
- ກະກຽມຈັດກອງປະຊຸມ ກ່ຽວກັບ LAO-WEN;
- ປະຕິບັດໜ້າທີ່ຕາມການມອບໝາຍຂອງຂັ້ນເທິງ.

ມາດຕາ 2 ມອບໃຫ້ ກົມກວດກາປ່າໄມ້ ແລະ ບັນດາທ່ານ ທີ່ໄດ້ຮັບການຕົກລົງແຕ່ງຕັ້ງຕາມ ມາດຕາ 1 ຈົ່ງຮັບຮູ້ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ ແລະ ລາຍງານການນຳ ກະຊວງຊາບເປັນແຕ່ລະໄລຍະ.

ມາດຕາ 3 ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 1559/ກປ, ລົງວັນທີ 29/06/2020 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ເພັດ ພົມພິພັກ

ບ່ອນນຳສົ່ງ:
- ທ່ານ ລມຕ, ຮລມຕ ທ່ານລະ 1 ສະບັບ
- ກົມຈັດຕັ້ງ ແລະ ພະນັກງານ 1 ສະບັບ
- ກົມກວດກາປ່າໄມ້ 1 ສະບັບ
- ບັນດາທ່ານທີ່ຖືກແຕ່ງຕັ້ງ ທ່ານລະ 1 ສະບັບ
- ເກັບມ້ຽນ 1 ສະບັບ